ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 700 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 07 / 11 / 25

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງຂອງ ລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ໜັງສືສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 687/ຄຈສພ, ລົງວັນທີ 29 ຕຸລາ 2025

## ນາຍົກລັດຖະມົນຕີ ອອກດຳລັດ
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ວັດທະນະທຳ ແລະ ການທ່ອງທ່ຽວ ແນໃສ່ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຂຽນເປັນຕົວອັກສອນຫຍໍ້ວ່າ: "ວທ" ແລະ ຂຽນເປັນພາສາ ອັງກິດວ່າ: Ministry of Culture and Tourism ຂຽນເປັນຕົວອັກສອນຫຍໍ້ "MCT", ແມ່ນກົງຈັກໜຶ່ງ ຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບ ວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ມີໜ້າທີ່ດັ່ງນີ້:

1. ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ, ຂໍ້ຕົກລົງ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ;
2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງ ຂອງລັດຖະບານ ລວມທັງອົງການສາກົນທີ່ ສ ປປ ລາວ ເປັນພາຄີກ່ຽວກັບວຽກງານວັດທະນະທຳ ແລະ ການທ່ອງທ່ຽວມາເປັນແຜນຍຸດທະສາດ, ແຜນພັດທະນາ, ແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
3. ຄົ້ນຄວ້າ, ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳອື່ນໆ ຂອງຂະແໜງວັດທະນະທຳ ແລະ ການທ່ອງທ່ຽວ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດານິຕິກຳລຸ່ມກົດໝາຍຊີ້ເຂດວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ໃຫ້ມີລັກສະນະຊາດ, ລັກສະນະມະຫາຊົນ ແລະ ກ້າວໜ້າ ຂອງປະຊາຊົນບັນດາເຜົ່າ;
5. ຄົ້ນຄວ້າ, ສ້າງ ແລະ ປັບປຸງນະໂຍບາຍສົ່ງເສີມການທ່ອງທ່ຽວ ໃຫ້ມີລັກສະນະຍຸດທະສາດ ໃນການປັບປຸງ ແລະ ພັດທະນາໂຄງປະກອບເສດຖະກິດ ຕາມເຂດແຄວ້ນຢູ່ພາຍໃນປະເທດ ຕິດພັນກັບການອະນຸລັກວັດທະນະທຳ, ຮີດຄອງປະເພນີ, ທຳມະຊາດ ແລະ ຮ່ອງຮອຍປະຫວັດສາດ ອັນດີງາມຂອງຊາດລາວ ພ້ອມຊຸກຍູ້, ຕິດຕາມ ແລະ ປົກປັກຮັກສາໃຫ້ມີຄວາມຍືນຍົງຄູ່ກັບຄົນລາວຕະຫຼອດໄປ;
6. ຄົ້ນຄວ້າ, ສ້າງ, ປັບປຸງມາດຕະຖານ ແລະ ເງື່ອນໄຂການສ້າງຕັ້ງ ຫຼື ຍົກເລີກຫົວໜ່ວຍການຈັດຕັ້ງທີ່ເຮັດວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ອະນຸລັກ, ຟື້ນຟູ ແລະ ປະຕິສັງຂອນ ເພື່ອຮັກສາໄວ້ຊຶ່ງຄຸນຄ່າມໍລະດົກ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຂອງຊາດ ໃຫ້ມີປະສິດທິຜົນ ແລະ ຍືນຍົງ ພ້ອມທັງໂຄສະນາເຜີຍແຜ່ດ້ວຍຮູບການຕ່າງໆ ສູ່ພາຍໃນ ແລະ ສາກົນ;
8. ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທົ່ວສັງຄົມ ໃຫ້ມີສ່ວນຮ່ວມ ໃນການປະດິດຄິດແຕ່ງດ້ານສິລະປະການສະແດງທຸກປະເພດ ເພື່ອຮັບໃຊ້ສັງຄົມ, ຄຸ້ມຄອງການຈັດງານປະກວດແຂ່ງຂັນປະເພດສິລະປະການສະແດງ, ການເດີນແບບ, ງານການບັນເທີງ, ການປະດິດແຕ່ງປະເພດຕ່າງໆ ການອະນຸລັກຮັກສາ ແລະ ໂຄສະນາເຜີຍແຜ່ຄຸນຄ່າດ້ານສິລະປະການສະແດງໃນລະດັບຕ່າງໆ ພ້ອມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເຂົ້າຮ່ວມງານວາງສະແດງວັດທະນະທຳ ແລະ ການສະແດງສິລະປະ ຢູ່ພາຍໃນ ແລະ ສາກົນ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການອະນຸຍາດ ຫຼື ການຍົກເລີກ ການຜະລິດ, ການຈຳໜ່າຍ, ການຂຸດຄົ້ນ ແລະ ການນຳເຂົ້າ-ສົ່ງອອກ ກ່ຽວກັບຜະລິດຕະພັນສິລະປະ ປະເພດພາບ, ສຽງ, ຮູບພາບ, ຮູບແກະສະຫຼັກ, ຮູບປັ້ນ-ຫຼໍ່ ແລະ ວັດຖຸບູຮານ ໃນຂອບເຂດທົ່ວປະເທດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
10. ຄົ້ນຄວ້າ ແລະ ກຳນົດມາດຕະຖານ ການສ້າງຄອບຄົວ, ບ້ານວັດທະນະທຳ, ກົມກອງ, ສຳນັກງານ, ອົງການວັດທະນະທຳ, ການເຄື່ອນໄຫວສະໂມສອນວັດທະນະທຳ, ສູນວັດທະນະທຳເດັກ, ສວນສາທາລະນະວັດທະນະທຳ, ປະເພນີ, ພິທີກຳ, ງານບຸນ-ສັງສັນ ອັນດີງາມຂອງປະຊາຊົນບັນດາເຜົ່າ ແລະ ຂອງຊາດ;
11. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ສຳຫຼວດ, ຂຶ້ນທະບຽນ ມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ພ້ອມທັງອານຸລັກຮັກສາ ບູລະນະປະຕິສັງຂອນ ແລະ ປັບປຸງມາດຕະຖານມໍລະດົກລະດັບທ້ອງຖິ່ນ ແລະ ລະດັບຊາດ;

12. ຄຸ້ມຄອງ, ຕິດຕາມ ແລະ ກວດກາການບໍລິການ ຂອງຫໍພິພິທະພັນ, ຫໍວັດທະນະທໍາ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍສະໝຸດ, ຫ້ອງສະໝຸດ, ຫ້ອງອ່ານໜັງສືລະດັບຊາດ, ລະດັບຂະແໜງການ ແລະ ລະດັບທ້ອງຖິ່ນ;
13. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາ ວຽກງານດ້ານ ການພິມຈໍາໜ່າຍ, ວຽກງານຫໍສະໝຸດ, ປ້າຍ ແລະ ແປພາສາ, ການປະດິດຄິດແຕ່ງບົດວັນນະຄະດີ, ບົດວັນນະກໍາ; ເຜີຍແຜ່ ແນະນໍາ ແລະ ສ້າງຈິດສໍານຶກ ໃຫ້ທົ່ວສັງຄົມເຂົ້າໃຈໃນການຄຸ້ມຄອງ, ການອະນຸລັກຮັກສາ ນໍາໃຊ້ທ່າແຮງ ແລະ ການສົ່ງເສີມ ຄຸນຄ່າມໍຣະດົກພູມປັນຍາໃນປຶ້ມສິ່ງພິມ, ພັບສາໜັງສືຜູກໃບລານ ເອກະສານຂອງຊາດ ທີ່ຖືກຈັດພິມແຕ່ລະຍຸກສະໄໝ; ຕິດຕາມ, ກວດກາ ວຽກງານວັນນະຄະດີ ແລະ ພິມຈໍາໜ່າຍ, ການແປພາສາ, ຫໍສະໝຸດ ແລະ ປ້າຍ ໃນຂອບເຂດທົ່ວປະເທດ;
14. ຄົ້ນຄວ້າ, ຮຽບຮຽງ, ຈັດພິມ, ເຜີຍແຜ່ ຄວາມອຸດົມສົມບູນຂອງພາສາລາວ, ວັນນະຄະດີລາວ; ສົ່ງເສີມ ແລະ ພັດທະນາພາສາລາວ ໃຫ້ເປັນເອກະລັກ, ອຸດົມສົມບູນ ໃຫ້ສາມາດ ນໍາໃຊ້ເຂົ້າກັບຍຸກສະໄໝໄດ້; ຊຸກຍູ້ການປະດິດແຕ່ງບົດປະພັນວັນນະຄະດີປະເພດຕ່າງໆ; ສົ່ງເສີມວັດທະນະທໍາການອ່ານ, ການຂຽນ, ການເປ ໃນທົ່ວສັງຄົມ;
15. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານວິຈິດສິນ, ພຸດທະສິນ, ສິລະປະຫັດຖະກໍາ ພູມປັນຍາຂອງມວນຊົນພ້ອມທັງກໍານົດການສ້າງອະນຸສາວະລີ ຫຼື ທີ່ລະນຶກ, ການປະດັບປະດາ, ວາງສະແດງລະດັບຊາດ ແລະ ລະດັບສາກົນ;
16. ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ການທ່ອງທ່ຽວໃຫ້ຍືນຍົງຕາມທິດສີຂຽວ ແລະ ເຂັ້ມແຂງ, ໂຄສະນາແຫຼ່ງທ່ອງທ່ຽວ, ຊຸກຍູ້ທຸລະກິດການທ່ອງທ່ຽວ, ສົ່ງເສີມການທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ອງທ່ຽວປະເທດລາວ ພ້ອມທັງປູກຈິດສໍານຶກ ກ່ຽວກັບຄວາມຮູ້ພື້ນຖານການບໍລິການທີ່ດີ ຂອງຄົນລາວ ແລະ ຂອງຊາດລາວ;
17. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອກໍານົດແຜນພັດທະນາ ແລະຈັດສັນ, ບູລະນະແຫຼ່ງທ່ອງທ່ຽວທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ໃນຂອບເຂດທົ່ວປະເທດ;
18. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກໍານົດມາດຕະຖານ ແລະ ຈັດລະດັບຂັ້ນ ຫຼື ປະເພດ ຂອງທຸລະກິດນໍາທ່ຽວ, ໂຮງແຮມ, ເຮືອນພັກ, ຣີສອດ, ຮ້ານອາຫານ, ສະຖານບັນເທີງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕາມການແບ່ງຂັ້ນຄຸ້ມຄອງ;
19. ສ້າງ, ຈັດຕັ້ງ ຫຼື ເຂົ້າຮ່ວມ ກິດຈະກໍາ ວັດທະນະທໍາ ແລະ ການທ່ອງທ່ຽວຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ປັບປຸງບູລະນະ ສູນ-ຫ້ອງຂໍ້ມູນຂ່າວສານ, ເວັບໄຊການທ່ອງທ່ຽວ ໃຫ້ທັນສະໄໝ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແນໃສ່ ເພີ່ມທະວີການໂຄສະນາ ແລະ ປຸກລະດົມຂົນຂວາຍການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ຢ່າງແຂງແຮງ ແລະ ກວ້າງຂວາງ;
20. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການອໍານວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພ ໃຫ້ແກ່ນັກທ່ອງທ່ຽວເຊັ່ນ: ການເດີນທາງເຂົ້າ-ອອກ ແລະ ເດີນທາງທ່ອງທ່ຽວໃນ ສປປ ລາວ;
21. ຄົ້ນຄວ້າ ແລະ ນໍາສະເໜີ ລັດຖະບານ ພິຈາລະນາອະນຸມັດ ສ້າງຕັ້ງສໍານັກງານຜູ້ຕາງໜ້າກ່ຽວກັບວຽກງານວັດທະນະທໍາ ແລະ ການທ່ອງທ່ຽວ ຢູ່ຕ່າງປະເທດ;
22. ຄຸ້ມຄອງ ການເຄື່ອນໄຫວ ຂອງບັນດາ ສະພາ, ສະມາຄົມວິຊາຊີບ ແລະ ນິຕິບຸກຄົນ ທີ່ດໍາເນີນທຸລະກິດ ຫຼື ທຸລະກໍາດ້ານວັດທະນະທໍາ ແລະ ການທ່ອງທ່ຽວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ; ຊີ້ນໍາສະພາສົ່ງເສີມການທ່ອງທ່ຽວແຫ່ງຊາດ ເພື່ອພັດທະນາອຸດສາຫະກໍາການທ່ອງທ່ຽວໃຫ້ເຂັ້ມແຂງ ແລະ ຍືນຍົງ;
23. ສ້າງ, ປັບປຸງ ແລະ ຍົກລະດັບ ຫຼັກສູດ, ປຶ້ມຕໍາລາ ແລະ ຈັດຕັ້ງການຮຽນ-ການສອນ ວິຊາການດ້ານວັດທະນະທໍາ ແລະ ການທ່ອງທ່ຽວ ເພື່ອກໍ່ສ້າງບໍາລຸງບຸກຄະລາກອນ ໃຫ້ຂະແໜງການ ແລະ ສັງຄົມ;
24. ປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງວັດທະນະທໍາ ແລະ ການທ່ອງທ່ຽວ; ຄຸ້ມຄອງ ແລະ ກໍານົດຕໍາແໜ່ງງານ, ສ້າງແຜນການບໍາລຸງ, ກໍ່ສ້າງ, ສັບຊ້ອນພະນັກງານ-ລັດຖະກອນ ລວມທັງສົ່ງເສີມບົດບາດຍິງ-ຊາຍ, ການປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂອງກະຊວງວັດທະນະທໍາ ແລະ ການທ່ອງທ່ຽວ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
25. ຕິດຕາມ ການປະຕິບັດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງ ຂອງຂະແໜງການຕົນ ແຕ່ສູນກາງຮອດທ້ອງຖິ່ນ ເພື່ອສະກັດກັ້ນປາກົດການລະເມີດກົດໝາຍ ແລະ ລະບຽບການ; ຄຸ້ມຄອງ, ຊຸກຍູ້, ຊີ້ນໍາ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ,

ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ລວມທັງນິຕິກຳ ທີ່ລັດຖະບານ ແລະ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ວາງອອກໃນແຕ່ລະໄລຍະ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາ ແລະ ພິຈາລະນາແກ້ໄຂຄຳຮ້ອງຟ້ອງ-ຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕໍ່ການຈັດຕັ້ງ ແລະ ບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ໃນຂົງເຂດວຽກງານວັດທະນະທຳ ແລະ ການທ່ອງທ່ຽວ;

26. ພົວພັນຮ່ວມມືກັບ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນດ້ານວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້ ແລະ ເປັນເສົາຄ້ຳວັດທະນະທຳ-ສັງຄົມອາຊຽນ ສປປ ລາວ;
27. ຄຸ້ມຄອງ ແລະ ບໍລິຫານ ການເງິນ, ຊັບສິນ ແລະ ເອກະສານ ຂອງກະຊວງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມ ການເຄື່ອນໄຫວວຽກງານບັນດາກິ່ງຈັກ ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນແຕ່ລະໄລຍະ; ຄຸ້ມຄອງ ແລະ ນຳໃຊ້ ກອງທຶນສົ່ງເສີມວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
28. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍ ຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ມີສິດດັ່ງນີ້:

1. ສະເໜີ ປັບປຸງກົງຈັກການຈັດຕັ້ງ ຕໍ່ລັດຖະບານ, ກຳນົດຕຳແໜ່ງງານ, ບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ຈັດວາງບຸກຄະລາກອນໃນທົ່ວຂະແໜງການວັດທະນະທຳ ແລະ ການທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ;
2. ຊີ້ນຳ ແລະ ຄຸ້ມຄອງ ຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດ ຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງຢ່າງລະອຽດ;
3. ກ່າວເຕືອນ, ປັບໃໝ, ສັ່ງໂຈະ, ຍົກເລີກ ແລະ ອະນຸຍາດ ການດຳເນີນທຸລະກິດດ້ານວັດທະນະທຳ ແລະ ການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເມື່ອເຫັນວ່າມີການລະເມີດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານວັດທະນະທຳ ແລະ ການທ່ອງທ່ຽວ; ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ;
5. ປະຕິບັດນະໂຍບາຍຍ້ອງຍໍສັນລະເສີນ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ, ຕໍ່ການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ທັງພາກລັດ ແລະ ເອກະຊົນ ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາຂະແໜງວັດທະນະທຳ ແລະ ການທ່ອງທ່ຽວ;
6. ຈັດກອງປະຊຸມ, ສະຫຼຸບຖອດຖອນບົດຮຽນ, ກອງປະຊຸມສຳມະນາວິທະຍາສາດ-ວິຊາການ ດ້ານວັດທະນະທຳ ແລະ ການທ່ອງທ່ຽວ ໃນລະດັບສູນກາງ ແລະ ທ້ອງຖິ່ນ; ເຂົ້າຮ່ວມກອງປະຊຸມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຂອງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນຕ່າງໆ ທີ່ພົວພັນເຖິງຄວາມຮັບຜິດຊອບ ຂອງຂະແໜງການວັດທະນະທຳ ແລະ ການທ່ອງທ່ຽວ;
7. ພົວພັນ, ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງສາກົນຕ່າງໆ ແລະ ທ້ອງຖິ່ນ ເພື່ອເກັບກຳສະພາບ, ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ການປະຕິບັດວຽກງານ ໃນຂົງເຂດວັດທະນະທຳ ແລະ ການທ່ອງທ່ຽວ ແລະ ບັນດາຂະແໜງການຂອງເສົາຄ້ຳວັດທະນະທຳ-ສັງຄົມ ອາຊຽນ ສປປລາວ;
8. ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານວັດທະນະທຳ ແລະ ການທ່ອງທ່ຽວ ຕາມການຕົກລົງ ຂອງລັດຖະບານ ບົນພື້ນຖານກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;
9. ສະເໜີແຜນງົບປະມານ, ສ້າງແຜນລາຍຮັບ-ລາຍຈ່າຍ ແລະ ດັດແກ້ງົບປະມານ ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ;

10.ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານ ແລະ ຊັບສິນບັດຂອງລັດ ທີ່ຂຶ້ນກັບການຄຸ້ມຄອງ ຂອງ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;

11.ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາ;
4. ກົມແຜນການ ແລະ ການຮ່ວມມືສາກົນ;
5. ກົມວັດທະນະທຳ ແລະ ສິລະປະການສະແດງ;
6. ກົມວັນນະຄະດີ ແລະ ພິມຈຳໜ່າຍ ;
7. ກົມມໍຣະດົກ ແລະ ວິຈິດສິນ;
8. ກົມຮູບເງົາ;
9. ກົມພັດທະນາການທ່ອງທ່ຽວ;
10. ກົມສົ່ງເສີມຕະຫຼາດການທ່ອງທ່ຽວ;
11. ກົມຄຸ້ມຄອງການທ່ອງທ່ຽວ.

**ຫົວໜ່ວຍວິຊາການ ລະດັບ 1 ຂຶ້ນກັບກະຊວງ**

1. ສະຖາບັນວັດທະນະທຳ ແລະ ການທ່ອງທ່ຽວ;
2. ສະຖາບັນວິຈິດສິນແຫ່ງຊາດ.

**ຫົວໜ່ວຍວິຊາການ ລະດັບ 2 ຂຶ້ນກັບກະຊວງ**

1. ກອງສິລະປະກອນແຫ່ງຊາດ;
2. ກອງກາຍຍະສິນແຫ່ງຊາດ;
3. ກອງລະຄອນແຫ່ງຊາດ;
4. ຫໍສະໝຸດແຫ່ງຊາດ;
5. ຫໍພິພິທະພັນແຫ່ງຊາດ;
6. ຫໍວັດທະນະທຳແຫ່ງຊາດ;
7. ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ;
8. ວິທະຍາໄລສິລະປະແຫ່ງຊາດ;
9. ວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ.

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ມີກົງຈັກການຈັດຕັ້ງທາງດ້ານວິຊາການ ຂອງຕົນຢູ່ຂັ້ນທ້ອງຖິ່ນ ຕາມເງື່ອນໄຂຕົວຈິງຢູ່ແຕ່ລະຂັ້ນ ຕາມການຕົກລົງຂອງອົງການປົກຄອງທ້ອງຖິ່ນ ໂດຍເອກະພາບກັບກະຊວງ ວັດທະນະທຳ ແລະ ການທ່ອງທ່ຽວ ແລະ ຄະນະຈັດຕັ້ງສູນກາງພັກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນ ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ປະກອບມີ:

1. ລັດຖະມົນຕີ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງການຕົນ ຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍລັດຖະບານ; ໃນເວລາຕິດຂັດ ລັດຖະມົນຕີ ຕ້ອງມອບສິດໃຫ້ຮອງລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;
2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານ ໃດໜຶ່ງ ຕາມການມອບໝາຍ ຂອງລັດຖະມົນຕີ; ຮອງລັດຖະມົນຕີ ເປັນຜູ້ຮັກສາການແທນ ໃນເວລາ ລັດຖະມົນຕີ ຕິດຂັດ;
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ, ຜູ້ອຳນວຍການ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ, ຮອງຜູ້ອຳນວຍການ, ຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າພະແນກ, ຮອງຫົວໜ້າຂະແໜງ, ລັດຖະກອນວິຊາການ ແລະ ລັດຖະກອນຊ່ວຍວຽກບໍລິຫານຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການນຳພາເປັນໝູ່ຄະນະ, ລວມສູນປະຊາທິປະໄຕ ໃນການພິຈາລະນາຕົກລົງ, ຮັບຮອງ ບັນຫາທີ່ສຳຄັນ ກ່ຽວກັບວຽກງານຂອງຂະແໜງວັດທະນະທຳ ແລະ ການທ່ອງທ່ຽວ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍ ຫົວຄິດ ປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ແມ່ນຈັດຕັ້ງປະຕິບັດຕາມ ກົດໝາຍ ແລະ ລະບຽບການ; ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ; ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດພັດທະນາຂະແໜງການວັດທະນະທຳ ແລະ ການທ່ອງທ່ຽວ ແລະ ແຜນ ດຳເນີນງານຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໃນແຕ່ລະໄລຍະ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂະແໜງວັດທະນະທຳ ແລະ ການທ່ອງທ່ຽວ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍ ພ້ອມທັງ ປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມ ແລະ ສ່ອງແສງ ປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງ ປະຊຸມວິຊາການ ແລະ ປະຕິບັດ ລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສະຖາບັນ, ກອງວິຊາການ, ບັນດາຫົວໜ່ວຍວິຊາການທີ່ຂຶ້ນກັບກະຊວງ ຕາມທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຮັດກຸມ ແລະ ສອດຄ່ອງກັບໜ້າທີ່ການເມືອງ ຂອງ ຂະແໜງວັດທະນະທຳ ແລະ ການທ່ອງທ່ຽວ ໃນແຕ່ລະໄລຍະ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ບັນດາການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**